# ພິທີມອບ-ຮັບ ເຄື່ອງໃຊ້ຫ້ອງການ
# ໃຫ້ແກ່ກົມຕ້ານ ແລະ ສອບສວນການສໍ້ລາດບັງຫຼວງ




ເພື່ອເປັນການປະກອບສ່ວນຊ່ວຍເຫຼືອສັງຄົມ ໂດຍອີງໃສ່ຄວາມຮຽກຮ້ອງຕ້ອງການຂອງວຽກງານ ປະກອບສ່ວນເຂົ້າໃນວຽກງານຕ້ານການສໍ້ລາດບັງຫຼວງ ແນໃສ່ໃຫ້ຮັບປະກັນຄວາມປອດໄພຮອບດ້ານ, ມີຄວາມເປັນລະບຽບຮຽບຮ້ອຍ ແລະ ສາມາດເຄື່ອນໄຫວໄດ້ຢ່າງຄ່ອງຕົວ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໄດ້ມອບເຄື່ອງໃຊ້ຫ້ອງການ ໃຫ້ແກ່ກົມຕ້ານ ແລະ ສອບສວນການສໍ້ລາດບັງຫຼວງ ອົງການກວດກາແຫ່ງລັດ ເຊິ່ງປະກອບມີ ຕູ້ເຊັບ 01 ໜ່ວຍ ແລະ ຕູ້ໃສ່ເອກະສານ 01 ໜ່ວຍ ມູນຄ່າ **16.698.000 ກີບ**. ເຊິ່ງພິທີມອບ-ຮັບ ດັ່ງກ່າວ ໄດ້ຈັດຂຶ້ນໃນຕອນບ່າຍຂອງວັນທີ 14 ພະຈິກ 2022 ເວລາ 15:00 ໂມງ ທີ່ອາຄານອົງການກວດກາແຫ່ງລັດ ຕາງໜ້າມອບເຄື່ອງໃຊ້ຫ້ອງການໃນຄັ້ງນີ້ ໂດຍ **ທ່ານ ນ. ວັນຄຳ ລຸນທອນ ເລຂາໜ່ວຍພັກ**, ຜູ້ອຳນວຍການໃຫຍ່ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ແລະ **ໃຫ້ກຽດຮັບໂດຍ ທ່ານ ສີທອນ ສຸລິຍະວົງ ຄະນະພັກ**, ເລຂາໜ່ວຍພັກ, ຫົວໜ້າກົມຕ້ານ ແລະ ສອບສວນການສໍ້ລາດບັງຫຼວງ ແລະ ຕາງໜ້າຈາກທັງສອງພາກສ່ວນເຂົ້າຮ່ວມເປັນສັກຂີພະຍານ.




**ທ່ານ ນ. ວັນຄໍາ ລຸນທອນ ເລຂາໜ່ວຍພັກ**, ຜູ້ອໍານວຍການໃຫຍ່ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໄດ້ກ່າວວ່າ: ການປະກອບສ່ວນຄັ້ງນີ້ຖືວ່າເປັນໂອກາດດີທີ່ ແລະ ເປັນຂະບວນການໜຶ່ງເພື່ອສະເຫຼີມສະຫຼອງວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ຄົບຮອບ 54 ປີ, ເພື່ອຂໍ່ານັບຮັບຕ້ອນວັນຊາດທີ 02 ທັນວາຄົບຮອບ 47 ປີ ເວົ້າລວມ ເວົ້າສະເພາະກໍ່ຄື ວັນສ້າງຕັ້ງ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຄົບຮອບ 03 ປີ ທີ່ຈະມາເຖິງນີ້ ແລະ ເປັນການປະກອບສ່ວນຊ່ວຍເຫຼືອສັງຄົມຕາມຄວາມອາດສາມາດ ແລະ ຄວາມຮຽກຮ້ອງຕ້ອງການຂອງແຕ່ລະພາກສ່ວນ. ຊຶ່ງຄັ້ງນີ້ ກໍ່ແມ່ນການປະກອບສ່ວນໃຫ້ແກ່ວຽກງານຂອງອົງການກວດກາແຫ່ງລັດ ກໍ່ຄືວຽກງານຂອງກົມ ຕ້ານ ແລະ ສອບສວນການການສໍ້ລາດບັງຫຼວງ, ເຖິງວ່າມູນຄ່າການປະກອບສ່ວນໃນຄັ້ງນີ້ ເປັນມູນຄ່າບໍ່ສູງ ແຕ່ກໍ່ເປັນນໍ້າຈິດນໍ້າໃຈ ຈາກບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຂອງພວກເຮົາ ແລະ ຫວັງຢ່າງຍິ່ງວ່າອຸປະກອນທີ່ນໍາມາມອບໃນຄັ້ງນີ້ຈະເປັນປະໂຫຍດໃຫ້ແກ່ວຽກງານ ບໍ່ຫຼາຍກໍ່ໜ້ອຍ.

ໃນໂອກາດດັ່ງກ່າວ **ທ່ານ ສີທອນ ສຸລິຍະວົງ ຄະນະພັກ**, ເລຂາໜ່ວຍພັກ, ຫົວໜ້າກົມຕ້ານ ແລະ ສອບສວນການສໍ້ລາດບັງຫຼວງ ກໍ່ໄດ້ສະແດງຄວາມຂອບໃຈໃນການປະກອບສ່ວນຊ່ວຍເຫຼືອ ຂອງບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໃນຄັ້ງນີ້ ແລະ ຈະໄດ້ນໍາໃຊ້ເຂົ້າໃນການປະຕິບັດວຽກງານວິຊາສະເພາະຂອງຕົນ ຢ່າງຄຸ້ມຄ່າ ແລະ ນໍາໃຊ້ໃຫ້ເກີດຜົນປະໂຫຍດຍາວນານ ແລະ ສູງສຸດ.

ໃນຕອນທ້າຍຂອງພິທີ **ທ່ານ ສີທອນ ສຸລິຍະວົງ ຄະນະພັກ**, ເລຂາໜ່ວຍພັກ, ຫົວໜ້າກົມຕ້ານ ແລະ ສອບສວນການສໍ້ລາດບັງຫຼວງ ກໍ່ໄດ້ໃຫ້ກຽດມອບໃບກຽດຕິຄຸນທີ່ມີຜົນງານປະກອບສ່ວນທາງດ້ານວັດຖຸໃຫ້ແກ່ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຕື່ມອີກ.



